ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ເລກທີ 0596/ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 14 ມິຖຸນາ 2023

# ແຈ້ງການ

**ເຖິງ:** - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

- ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.

**ເລື່ອງ:** ປັບຂຶ້ນລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010.
- ອີງຕາມ ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.
- ອີງຕາມ ແຈ້ງການສະບັບເລກທີ 134/ຫສນຍ, ລົງວັນທີ 01 ກຸມພາ 2023, ທີ່ດຊີ້ນຳກ່ຽວກັບການມອບ ໃຫ້ກົມວິຊາການ (ກົມການຄ້າພາຍໃນ) ເຊັນແຈ້ງການປັບລາຄານ້ຳມັນເຊື້ອໄຟແຕ່ລະໄລຍະ.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການເຊັນແຈ້ງການປັບລາຄານ້ຳມັນເຊື້ອໄຟໃນແຕ່ລະໄລຍະ ສະບັບເລກທີ 0123/ອຄ, ລົງວັນທີ 01 ກຸມພາ 2023.
- ອີງຕາມ ທິດຊີ້ນຳຂອງຄະນະນຳກະຊວງອຸດສາຫະກຳ ແລະ ການຄ້າ ຄັ້ງວັນທີ 14 ມິຖຸນາ 2023.
- ອີງຕາມ ສະພາບການເໜັງຕີງຂຶ້ນ-ລົງລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂົງເຂດ.

ເພື່ອເຮັດໃຫ້ການປັບລາຄານ້ຳມັນເຊື້ອໄຟ ພາຍໃນປະເທດ ຂຶ້ນ-ລົງ ຕາມການເໜັງຕີງຂອງຕະຫຼາດໂລກ ທັງນີ້ ກໍເພື່ອຮັບປະກັນການສະໜອງນ້ຳມັນເຊື້ອໄຟ ໃຫ້ເປັນປົກກະຕິ.

**ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງໄດ້ອອກແຈ້ງການ ເຖິງທ່ານຊາບ ແລະ ປະຕິບັດ ດັ່ງນີ້:**

1. ປັບຂຶ້ນລາຄາຂາຍຍ່ອຍນ້ຳມັນເຊື້ອໄຟທຸກຊະນິດຄື: ນ້ຳມັນແອັດຊັງພິເສດ ປັບຂຶ້ນ 400 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ ປັບຂຶ້ນ 390 ກີບ/ລິດ ແລະ ນ້ຳມັນກາຊວນ ປັບຂຶ້ນ 200 ກີບ/ລິດ.

ລາຄາຕາມຕາຕະລາງລຸ່ມນີ້ ແມ່ນລາຄາຈຸດນະຄອນຫຼວງວຽງຈັນ:

ຫົວໜ່ວຍ:ລິດ.

| ລ/ດ | ຊະນິດ | ລາຄາຂາຍຍ່ອຍ | | ເພີ່ມ/ຫຼຸດ | | ໝາຍເຫດ |
|---|---|---|---|---|---|---|
| | | ປະຈຸບັນ | ໃໝ່ | | | |
| | | ກີບ | ກີບ | ກີບ | % | |
| 1 | ອຊ ພິເສດ | 25.320 | 25.720 | 400 | 1,58 | |
| 2 | ອຊ ທຳມະດາ | 19.720 | 20.110 | 390 | 1,98 | |
| 3 | ກາຊວນ | 17.060 | 17.260 | 200 | 1,17 | |

(ສຳລັບລາຄາຂາຍຍ່ອຍເຂດເທດສະບານແຂວງ ແມ່ນມີເອກະສານຊ້ອນທ້າຍ).

2. ລາຄາໃໝ່ນີ້ ແມ່ນໃຫ້ເລີ່ມປະຕິບັດວັນທີ 15 ມິຖຸນາ 2023, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.

3. ການຄິດໄລ່ພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0595/ກຄພນ, ລົງວັນທີ 14 ມິຖຸນາ 2023 ຈົນກວ່າຈະມີການປ່ຽນແປງ.

4. ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.

5. ໃຫ້ພະແນກ ອຄ ແຂວງ, ນະຄອນຫຼວງວຽງຈັນ ຊີ້ນຳຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ລົງຕິດຕາມ, ກວດກາການຈັດຕັ້ງປະຕິບັດລາຄາໃໝ່ນີ້ຂອງປ້ຳນ້ຳມັນເຊື້ອໄຟ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເປັນປົກກະຕິ, ຫາກພົບເຫັນ ປ້ຳໃດບໍ່ປະຕິບັດຕາມລາຄາໃໝ່ນີ້ ໃຫ້ນຳໃຊ້ມາດຕະການຕ່າງໆ ຕາມລະບຽບການໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

6. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 0570/ກຄພນ, ລົງວັນທີ 07 ມິຖຸນາ 2023.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ. ໌

ຫົວໜ້າກົມ

ກົມການຄ້າພາຍໃນ

ພູວຽງ ພົງສາ

<u>ບ່ອນສົ່ງ:</u>

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ລາຄາຂາຍຍ່ອຍໜ້າປໍ້ານ້ຳມັນເຊື້ອໄຟ ໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ເລີ່ມປະຕິບັດ ວັນທີ 15 ມິຖຸນາ 2023, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 25,720 | 20,110 | 17,260 |
| 2 | ແຂວງຜົ້ງສາລີ | 26,710 | 21,100 | 18,250 |
| 3 | ແຂວງຫຼວງນ້ຳທາ | 26,210 | 20,610 | 17,750 |
| 4 | ແຂວງອຸດົມໄຊ | 26,390 | 20,780 | 17,930 |
| 5 | ແຂວງບໍ່ແກ້ວ | 25,820 | 20,210 | 17,360 |
| 6 | ແຂວງຫຼວງພະບາງ | 26,220 | 20,620 | 17,770 |
| 7 | ແຂວງໄຊຍະບູລີ | 26,040 | 20,440 | 17,590 |
| 8 | ແຂວງຫົວພັນ | 26,210 | 20,620 | 17,770 |
| 9 | ແຂວງຊຽງຂວາງ | 25,910 | 20,300 | 17,450 |
| 10 | ແຂວງວຽງຈັນ | 25,720 | 20,110 | 17,260 |
| 11 | ແຂວງບໍລິຄຳໄຊ | 25,830 | 20,230 | 17,380 |
| 12 | ແຂວງຄຳມ່ວນ | 25,750 | 20,140 | 17,290 |
| 13 | ແຂວງສະຫວັນນະເຂດ | 25,750 | 20,140 | 17,290 |
| 14 | ແຂວງສາລະວັນ | 26,000 | 20,400 | 17,550 |
| 15 | ແຂວງຈຳປາສັກ | 25,780 | 20,170 | 17,320 |
| 16 | ແຂວງເຊກອງ | 26,000 | 20,400 | 17,550 |
| 17 | ແຂວງອັດຕະປື | 26,050 | 20,440 | 17,590 |
| 18 | ແຂວງໄຊສົມບູນ | 26,140 | 20,530 | 17,690 |

ນະຄອນຫຼວງວຽງຈັນ, ວັນທີ 14 ມິຖຸນາ 2023

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ເລກທີ 0595/ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 14 ມິຖຸນາ 2023

# ໂຄງສ້າງລາຄານ້ຳມັນເຊື້ອໄຟ

ຫົວໜ່ວຍ: ກີບ/ລິດ.

| ຫ້ອງ | | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 | 13 | 14 | 15 | 16 | 17 | 18 | 19 | 20 | 21 | 22 | 23 | 24 | 25 |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ບໍລິສັດ ນຳເຂົ້າ ແລະ ສົ່ງອອກ | | | | | | | | | | | | | ບໍລິສັດ ຈຳໜ່າຍພາຍໃນ | | | | | ປ້ຳນ້ຳມັນເຊື້ອໄຟ | | | | | | |
| ບ່ອນ | ຊະນິດ | ລາຄາ CIF ຄິດໄລ່ພາສີ (ໂດລາສະຫະລັດ) | ລາຄາ CIF ຄິດໄລ່ພາສີ (ກີບ) | ພາສີ ຂາເຂົ້າ | ອາກອນ ຊົມໃຊ້ ຂາເຂົ້າ | ກທທາງ | ຄັງແຮ | ລວມ ຕົ້ນທຶນ | ອມພ ສົ່ງເຂົ້າ | ຄ່າບໍລິການ | ບໍ່ລວມ ອມພ | ອມພ 7% | ລວມ ອມພ | ອມພ ມອບຕື່ມ | ຄ່າ ບໍລິການ | ບໍ່ລວມ ອມພ | ອມພ 7% | ລວມ ອມພ | ອມພ ມອບຕື່ມ | ຄ່າ ບໍລິການ | ບໍ່ລວມ ອມພ | ອມພ 7% | ປະຈຸບັນ | ລວມ ອມພ (ສະເໜີ) | ອມພ ມອບຕື່ມ | ເພີ່ມ/ ຫຼຸດ |
| ນ.ວ | ອ/ຊ ພິເສດ | $ 0.6720 | 12,329 | 2,466 | 5,918 | 520 | 800 | 22,033 | 1,450 | 800 | 22,833 | 1,598 | 24,431 | 148 | 600 | 23,433 | 1,640 | 25,070 | 42 | 600 | 24,033 | 1,682 | **25,320** | **25,720** | 42 | 400 |
| | ອ/ຊ ທຳມະດາ | $ 0.6362 | 11,672 | 1,751 | 2,148 | 520 | 650 | 16,740 | 1,090 | 850 | 17,590 | 1,231 | 18,822 | 141 | 600 | 18,190 | 1,273 | 19,460 | 42 | 600 | 18,790 | 1,315 | **19,720** | **20,110** | 42 | 390 |
| | ກາຊວນ | $ 0.6499 | 11,923 | 596 | - | 520 | 1,140 | 14,179 | 876 | 850 | 15,029 | 1,052 | 16,081 | 176 | 500 | 15,529 | 1,087 | 16,620 | 35 | 600 | 16,129 | 1,129 | **17,060** | **17,260** | 42 | 200 |
| ຄຳມ່ວນ | ອ/ຊ ພິເສດ | $ 0.6729 | 12,346 | 2,469 | 5,926 | 520 | 800 | 22,062 | 1,452 | 800 | 22,862 | 1,600 | 24,462 | 148 | 600 | 23,462 | 1,642 | 25,100 | 42 | 600 | 24,062 | 1,684 | **25,350** | **25,750** | 42 | 400 |
| | ອ/ຊ ທຳມະດາ | $ 0.6374 | 11,694 | 1,754 | 2,152 | 520 | 650 | 16,770 | 1,092 | 850 | 17,620 | 1,233 | 18,853 | 141 | 600 | 18,220 | 1,275 | 19,500 | 42 | 600 | 18,820 | 1,317 | **19,750** | **20,140** | 42 | 390 |
| | ກາຊວນ | $ 0.6514 | 11,950 | 598 | - | 520 | 1,140 | 14,208 | 878 | 850 | 15,058 | 1,054 | 16,112 | 176 | 500 | 15,558 | 1,089 | 16,650 | 35 | 600 | 16,158 | 1,131 | **17,090** | **17,290** | 42 | 200 |
| ສະຫວັນ | ອ/ຊ ພິເສດ | $ 0.6729 | 12,346 | 2,469 | 5,926 | 520 | 800 | 22,061 | 1,452 | 800 | 22,861 | 1,600 | 24,461 | 148 | 600 | 23,461 | 1,642 | 25,100 | 42 | 600 | 24,061 | 1,684 | **25,350** | **25,750** | 42 | 400 |
| | ອ/ຊ ທຳມະດາ | $ 0.6374 | 11,694 | 1,754 | 2,152 | 520 | 650 | 16,770 | 1,092 | 850 | 17,620 | 1,233 | 18,854 | 141 | 600 | 18,220 | 1,275 | 19,500 | 42 | 600 | 18,820 | 1,317 | **19,750** | **20,140** | 42 | 390 |
| | ກາຊວນ | $ 0.6514 | 11,950 | 598 | - | 520 | 1,140 | 14,208 | 878 | 850 | 15,058 | 1,054 | 16,112 | 176 | 500 | 15,558 | 1,089 | 16,650 | 35 | 600 | 16,158 | 1,131 | **17,090** | **17,290** | 42 | 200 |
| ຈຳປາສັກ | ອ/ຊ ພິເສດ | $ 0.6737 | 12,361 | 2,472 | 5,933 | 520 | 800 | 22,086 | 1,454 | 800 | 22,886 | 1,602 | 24,488 | 148 | 600 | 23,486 | 1,644 | 25,130 | 42 | 600 | 24,086 | 1,686 | **25,380** | **25,780** | 42 | 400 |
| | ອ/ຊ ທຳມະດາ | $ 0.6386 | 11,716 | 1,757 | 2,156 | 520 | 650 | 16,799 | 1,094 | 850 | 17,649 | 1,235 | 18,885 | 141 | 600 | 18,249 | 1,277 | 19,530 | 42 | 600 | 18,849 | 1,319 | **19,780** | **20,170** | 42 | 390 |
| | ກາຊວນ | $ 0.6528 | 11,976 | 599 | - | 520 | 1,140 | 14,235 | 880 | 850 | 15,085 | 1,056 | 16,141 | 176 | 500 | 15,585 | 1,091 | 16,680 | 35 | 600 | 16,185 | 1,133 | **17,120** | **17,320** | 42 | 200 |
| ບໍ່ແກ້ວ | ອ/ຊ ພິເສດ | $ 0.6751 | 12,386 | 2,477 | 5,945 | 520 | 800 | 22,128 | 1,457 | 800 | 22,928 | 1,605 | 24,533 | 148 | 600 | 23,528 | 1,647 | 25,180 | 42 | 600 | 24,128 | 1,689 | **25,420** | **25,820** | 42 | 400 |
| | ອ/ຊ ທຳມະດາ | $ 0.6401 | 11,743 | 1,762 | 2,161 | 520 | 650 | 16,836 | 1,097 | 850 | 17,686 | 1,238 | 18,924 | 141 | 600 | 18,286 | 1,280 | 19,570 | 42 | 600 | 18,886 | 1,322 | **19,820** | **20,210** | 42 | 390 |
| | ກາຊວນ | $ 0.6548 | 12,013 | 601 | - | 520 | 1,140 | 14,274 | 883 | 850 | 15,124 | 1,059 | 16,182 | 176 | 500 | 15,624 | 1,094 | 16,720 | 35 | 600 | 16,224 | 1,136 | **17,160** | **17,360** | 42 | 200 |
| ຊຽງຂວາງ | ອ/ຊ ພິເສດ | $ 0.6778 | 12,435 | 2,487 | 5,969 | 520 | 800 | 22,212 | 1,462 | 800 | 23,012 | 1,611 | 24,622 | 148 | 600 | 23,612 | 1,653 | 25,260 | 42 | 600 | 24,212 | 1,695 | **25,510** | **25,910** | 42 | 400 |
| | ອ/ຊ ທຳມະດາ | $ 0.6436 | 11,808 | 1,771 | 2,173 | 520 | 650 | 16,921 | 1,103 | 850 | 17,771 | 1,244 | 19,015 | 141 | 600 | 18,371 | 1,286 | 19,660 | 42 | 600 | 18,971 | 1,328 | **19,910** | **20,300** | 42 | 390 |
| | ກາຊວນ | $ 0.6591 | 12,092 | 605 | - | 520 | 1,140 | 14,357 | 889 | 850 | 15,207 | 1,064 | 16,271 | 176 | 500 | 15,707 | 1,099 | 16,810 | 35 | 600 | 16,307 | 1,141 | **17,250** | **17,450** | 42 | 200 |
| ໄຊຍະບູລີ | ອ/ຊ ພິເສດ | $ 0.6751 | 12,386 | 2,477 | 5,945 | 520 | 800 | 22,128 | 1,457 | 800 | 22,928 | 1,605 | 24,533 | 148 | 600 | 23,528 | 1,647 | 25,180 | 42 | 600 | 24,128 | 1,689 | **25,420** | **25,820** | 42 | 400 |
| | ອ/ຊ ທຳມະດາ | $ 0.6401 | 11,743 | 1,762 | 2,161 | 520 | 650 | 16,836 | 1,097 | 850 | 17,686 | 1,238 | 18,924 | 141 | 600 | 18,286 | 1,280 | 19,570 | 42 | 600 | 18,886 | 1,322 | **19,820** | **20,210** | 42 | 390 |
| | ກາຊວນ | $ 0.6548 | 12,013 | 601 | - | 520 | 1,140 | 14,274 | 883 | 850 | 15,124 | 1,059 | 16,182 | 176 | 500 | 15,624 | 1,094 | 16,720 | 35 | 600 | 16,224 | 1,136 | **17,160** | **17,360** | 42 | 200 |

ໝາຍເຫດ : ອັດຕາແລກປ່ຽນ ທ/ຄ ການຄ້າຕ່າງປະເທດລາວ ມະຫາຊົນ ມື້ຄິດໄລ່ໂຄງສ້າງ ຄັ້ງວັນທີ 14/06/2023 = 18,347 ກີບ/ໂດລາສະຫະລັດ

| | ອ/ຊ ພິເສດ | ອ/ຊ ທຳມະດາ | ກາຊວນ |
|---|---|---|---|
| ພາສີ | 20% | 15% | 5% |
| ອາກອນ | 40% | 16% | 0% |
| ອມພ | 7% | 7% | 7% |

ຫົວໜ້າກົມ

ກະຊວງອຸດສາຫະກຳ ແລະ ການຄ້າ ກົມການຄ້າພາຍໃນ

ພູວຽງ ພົງສາ